COVID smart measures for schools

Information for families

# ມາດຕະການອັນສະຫຼາດກ່ຽວກັບ COVID ສໍາລັບໂຮງຮຽນ

## ຂໍ້ມູນສໍາລັບຄອບຄົວ

ພວກເຮົາຮູ້ວ່າການຢູ່ຮ່ວມກັນໃນຫ້ອງຮຽນເປັນສິ່ງທີ່ດີທີ່ສຸດສໍາລັບການຮຽນຮູ້, ການຂະຫຍາຍຕົວ ແລະສະຫວັດດີການຂອງນັກຮຽນຂອງພວກເຮົາ. ເທີມນີ້ພວກເຮົາຈະສືບຕໍ່ປະຕິບັດຫຼາຍມາດຕະການເພື່ອເຮັດໃຫ້ພວກເຮົາຈັດລໍາດັບຄວາມສໍາຄັນທັງຄວາມເປັນຢູ່ທີ່ດີຂອງນັກຮຽນຂອງພວກເຮົາແລະສະພາບແວດລ້ອມການຮຽນຮູ້ທີ່ສະໝໍ່າສະເໝີແລະມີປະສິດທິພາບ.

### ຢູ່ເຮືອນຖ້າບໍ່ສະບາຍ

- ຖ້າລູກຂອງທ່ານບໍ່ສະບາຍ, ທ່ານຕ້ອງໃຫ້ພວກເຂົາຢູ່ເຮືອນ. ຖ້າພວກເຂົາສະແດງອາການ COVID-19 ພວກເຂົາກໍຄວນທໍາການກວດ COVID-19 (PCR ຫຼື RAT) ແລະປະຕິບັດຕາມຄໍາແນະນໍາຈາກລັດຖະບານNSWໃນການຈັດການກັບ COVID-19 ຢ່າງປອດໄພຢູ່ໃນເຮືອນ (managing COVID-19 safely at home).
- ລູກຂອງທ່ານຄວນຈະກັບຄືນໄປໂຮງຮຽນກໍຕໍ່ເມື່ອ ພວກເຂົາບໍ່ມີອາການໃດໆແລ້ວເທົ່ານັ້ນ.

### ການສັກຢາວັກຊີນ

- ການສັກຢາປ້ອງກັນ COVID-19 ແລະພະຍາດໄວຣັສອື່ນໆແມ່ນໜຶ່ງໃນວິທີທີ່ດີທີ່ສຸດໃນການປົກປ້ອງຕົນເອງ, ຄອບຄົວ ແລະ ຊຸມຊົນຂອງທ່ານ. ການສັກຢາວັກຊີນເປັນວິທີທີ່ປອດໄພ ແລະມີປະສິດທິພາບໃນການໃຫ້ລະບົບພູມຄຸ້ມກັນຂອງທ່ານຊ່ວຍຕ້ານພະຍາດຕ່າງໆ.
- ນັກຮຽນ ແລະ ພະນັກງານທຸກຄົນທີ່ມີສິດໄດ້ຮັບການຊຸກຍູ້ຢ່າງແຂງແຮງໃຫ້ຕິດຕາມການສັກຢາປ້ອງກັນສຸຂະພາບຂອງພວກເຂົາ.
- ພະນັກງານທັງໝົດທີ່ເຮັດວຽກຢູ່ໃນໂຮງຮຽນເພື່ອຈຸດປະສົງສະເພາະ (schools for specific purposes (SSPs)) ໄດ້ຖືກຂໍໃຫ້ຮັບການສັກຢາປ້ອງກັນພະຍາດ COVID-19 ສອງຄັ້ງ ຫຼື ມີຂໍ້ຫ້າມທາງການແພດທີ່ຖືກຕ້ອງ.

### ການກວດ ດ້ວຍ ຣາປິດ ແອນຕິເຈັນ

- ຄວນໃຊ້ການກວດ ຣາປິດ ແອນຕິເຈນ (Rapid antigen tests (RATs)) ຖ້າລູກຂອງທ່ານສະແດງອາການ COVID-19.
- ນັກຮຽນທີ່ກວດ COVID-19 ເປັນທາງບວກໄດ້ຖືກຊຸກຍູ້ໃຫ້ແຈ້ງໂຮງຮຽນຂອງພວກເຂົາຊາບ ແລະລົງ ທະບຽນຜົນກວດທາງບວກກັບ Service NSW ເພື່ອໃຫ້ເຂົ້າເຖິງຄໍາແນະ ນໍາ ແລະ ການຊ່ວຍເຫຼືອຈາກ ກົມ ອານາໄມ NSW ໄດ້ທັນເວລາ.
- ໂຮງຮຽນຍັງຈະເກັບຮັກສາຊຸດການກວດ ຣາປິດ ແອນຕິເຈັນ ໃນສະຖານທີ່ໂຮງຮຽນເພື່ອຈຸດປະສົງໃນການກວດການເຝົ້າລະວັງໃນກໍລະນີທີ່ມີການແຜ່ລະບາດ.

### ສຸຂະອະນາໄມແລະການທໍາຄວາມສະອາດ

- ນັກຮຽນໄດ້ຖືກຊຸກຍູ້ໃຫ້ລ້າງມືດ້ວຍສະບູ ແລະ ນໍ້າເປັນປະຈໍາ ແລະ ໃຊ້ອຸປະກອນປ້ອງກັນສ່ວນຕົວຕາມຄວາມຕ້ອງການ.
- ການທໍາຄວາມສະອາດໂຮງຮຽນທີ່ເພີ້ມຂຶ້ນໃນແຕ່ລະມື້ຈະເນັ້ນໃສ່ບໍລິເວນທີ່ຖືກສໍາຜັດຫຼາຍແລະພື້ນທີ່ແຂງອື່ນໆ, ບ່ອນຈັບປະຕູ, ຕູ້ເກັບຂອງ, ປຸ່ມເປີດປິດໄຟຟ້າ ແລະ ຣາວຈັບຂັ້ນໄດ ແລະ ພື້ນທີ່ເຄື່ອນໄຫວ.

### ການລະບາຍອາກາດ

- ອາກາດບໍລິສຸດແມ່ນຮູບແບບການລະບາຍອາກາດທີ່ມີປະສິດທິພາບທີ່ສຸດເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການແພ່ເຊື້ອໂຣກ.
- ໃນຊ່ວງເດືອນທີ່ມີອາກາດອຸ່ນຂຶ້ນ, ລະບົບເຮັດຄວາມເຢັນຈະຖືກນໍາໃຊ້ສົມທົບກັບວິທີການລະບາຍອາກາດເພື່ອໃຫ້ດຸ່ນດ່ຽງລະຫວ່າງຄວາມສະບາຍຂອງຄວາມຮ້ອນ.
- ສະຖານທີ່ຮຽນທັງໝົດໃນໂຮງຮຽນຫຼວງໄດ້ຖືກກວດກາເພື່ອຮັບປະກັນລະດັບຄວາມເໝາະສົມຂອງລະບົບລະບາຍອາກາດ ແລະ ເຄື່ອງຟອກອາກາດເມື່ອຈໍາເປັນ.
- ການນໍາໃຊ້ສະຖານທີ່ກາງແຈ້ງຈະສືບຕໍ່ໄດ້ຮັບການຊຸກຍູ້ໃນບ່ອນທີ່ເປັນໄປໄດ້.

## ໜ້າກາກ

- ການໃສ່ໜ້າກາກແມ່ນໄດ້ຮັບການຊຸກຍູ້ຢ່າງແຂງຂັນໃນບ່ອນທີ່ເປັນໄປໄດ້ສໍາລັບນັກຮຽນ ພະນັກງານແລະຜູ້ມາຢ້ຽມຢາມໝົດທຸກຄົນໂດຍສະເພາະໃນສະຖາທີ່ໃນຮົ່ມແລະ/ຫຼືໃນເວລາທີ່ບໍ່ສາມາດເວັ້ນລະຍະຫ່າງກັນໄດ້ ແລະ ຖ້າວ່າພວກເຂົາໄດ້ຖືກສໍາຜັດກັບCOVID-19 ມາ.
- ການໃສ່ໜ້າກາກຍັງເປັນສິ່ງທີ່ຕ້ອງປະຕິບັດຕໍ່ໄປຢູ່ຕະຫຼອດເວລາສໍາລັບພະນັກງານ, ອາສາສະໝັກ ແລະ ຄົນງານອື່ນໆທີ່ໃຫ້ການສະໜັບສະໜູນນັກຮຽນຂອງພວກເຮົາທີ່ມີຄວາມສ່ຽງສູງຕໍ່ການເປັນພະຍາດຮ້າຍແຮງຖ້າພວກເຂົາຕິດເຊື້ອ COVID-19, ບໍ່ວ່າພວກເຂົາຈະຢູ່ໃນໂຮງຮຽນເພື່ອຈຸດປະສົງສະເພາະ, ໜ່ວຍງານຊ່ວຍເຫຼືອ ຫຼື ໃນຫ້ອງຮຽນຂອງໂຮງຮຽນຫຼັກ.

## ຜູ້ມາຢ້ຽມຢາມ

- ບັນດາຜູ້ມາຢ້ຽມຢາມສາມາດເຂົ້າໂຮງຮຽນໂດຍບໍ່ຄໍານຶງເຖິງສະຖານະການສັກຢາຂອງພວກເຂົາ.
- ບັນດາຜູ້ມາຢ້ຽມຢາມທີ່ມີສ່ວນຮ່ວມໂດຍກົງກັບນັກຮຽນໃນບາງບ່ອນທີ່ມີຄວາມສ່ຽງສູງສໍາລັບການດໍາເນີນງານຂອງໂຮງຮຽນ ແລະການຈັດສົ່ງຫຼັກສູດ ແລະຄູ່ຮ່ວມງານດ້ານສຸຂະພາບເພື່ອຄວາມເປັນຢູ່ທີ່ດີຂອງນັກຮຽນ, ອາດຈະຕ້ອງໃສ່ໜ້າກາກ.

## ກິດຈະກໍາຕ່າງໆ

- ການປະເມີນຄວາມສ່ຽງດ້ານສຸຂະພາບ ແລະ ຄວາມປອດໄພຈະຖືກລວມເຂົ້າໃນການວາງແຜນກິດຈະກໍາຕ່າງໆ, ລວມທັງການທັດສະນະສຶກສາ ແລະ ການຕັ້ງແຄ້ມແບບຄ້າງຄືນ.
- ບັນດາພໍ່ແມ່ ແລະຜູ້ດູແລຈະຖືກແຈ້ງໃຫ້ຊາບເຖິງຄວາມສ່ຽງຂອງການເປີດຕໍ່ການສໍາຜັດ ແລະຈະຕ້ອງໃຫ້ ການອະນຸຍາດສໍາລັບກິດຈະກໍາບາງຢ່າງ.

## ການຕອບສະໜອງກັບສະຖານະການທ້ອງຖິ່ນ

- ໂຮງຮຽນຈະເຮັດວຽກຮ່ວມກັບທີມບໍລິຫານຈັດການກໍລະນີສຸຂະພາບ ຄວາມປອດໄພ ແລະ ຄວາມເປັນຢູ່ທີ່ດີຂອງພະນັກງານເພື່ອຕອບສະໜອງໃຫ້ເໝາະສົມກັບສະຖານະການທ້ອງຖິ່ນ, ລວມທັງການລະບາດຂອງພະຍາດໄວຣັສ.
- ໃນບາງກໍລະນີ, ໂຮງຮຽນອາດຈະອອກມາດຕະການເພີ່ມເຕີມຊົ່ວຄາວໃນລະຍະເວລາທີ່ຈໍາກັດເພື່ອຊ່ວຍຢຸດການຕິດເຊື້ອ, ລວມທັງການຮຽກຮ້ອງໃຫ້ມີການໃສ່ໜ້າກາກ, ເລື່ອນເວລາຫຼືຈໍາກັດກິດຈະກໍາທີ່ບໍ່ຈໍາເປັນແລະຊີ້ນໍາບາງກຸ່ມໃຫ້ຮຽນແບບທາງໄກ.

## ການຮຽນແບບທາງໄກ

- ໂຮງຮຽນສືບຕໍ່ໃນການເຂົ້າເຖິງແຫຼ່ງການຮຽນຮູ້ແບບດິຈິຕອລ, ແບບແນວປະຕິບັດ ແລະ ແບບພິມອອກເພື່ອສະໜັບສະໜູນນັກຮຽນທີ່ຕ້ອງການຮຽນຮູ້ແບບທາງໄກ.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາໂທຫາທ່ານຄູໃຫຍ່ຂອງໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການສອບຖາມ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບທີ່ເບີ 131 450 ແລະຂໍເອົານາຍພາສາລາວ. ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຢາກໂທຫາ ແລະ ຜູ້ຮັບສາຍຈະຫາເອົານາຍພາສາມາຊ່ວຍທ່ານໃນການສົນທະນາຂອງທ່ານຕາມສາຍ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ລັດຖະບານ NSW ມຸ່ງໝັ້ນທີ່ຈະຮັບປະກັນການດໍາເນີນງານຂອງໂຮງຮຽນສືບຕໍ່ໄປໃນຂະນະທີ່ໃຫ້ຄວາມສໍາຄັນກັບຄວາມປອດໄພແລະຄວາມເປັນຢູ່ທີ່ດີຂອງນັກຮຽນແລະພະນັກງານໂຮງຮຽນ.